Note: When this publication was originally published, we were known as Protection & Advocacy, Inc. (PAI).
In October 2008, we changed our name from PAI to Disability Rights California.

Laotian

# ຮ້ວາຍ! ລູກທີ່ຂາດສະມັຖພາບຂອງຂ້ອຍກຳລັງ ຊິຖືກໄລ່ອອກ!

## *ຂ້ອຍສາມາດເຮັດຫຍັງໄດ້ແດ່?*

## *ສິດທິຂອງລູກຂ້ອຍມີຫຍັງແດ່?*


**ABC Schools**
321 Apple Lane
Papyrus CA 98765
(123) 456-7890

ຮຽນພໍ່ແມ່ນັກຮຽນ:

ຂ້າພະເຈົ້າມີຄວາມເສັຽໃຈທີ່ຈະແຈ້ງ ໃຫ້ທ່ານຊາບວ່າ, ເນື່ອງຈາກຄວາມ ປະພຶດທີ່ບໍ່ສາມາດຍອມຮັບໄດ້ຂອງລູກ ທ່ານ, ລູກທ່ານຈະຖືກໄລ່ອອກຈາກ ໂຮງຮຽນ ABC ມື້ອື່ນ.

ດ້ວຍຄວາມນັບຖື

Ms. Jones
ຄູໃຫຍ່


ບໍລິສັດ **Protection & Advocacy, Inc.**
ໂທຣຟຣີ: 800.776.5746

| | |
|---|---|
| 100 Howe Ave., Suite 230-N<br>**Sacramento**, CA 95825<br>ໂທຣ: 916.488.9950 – ແຟກຊ: 916.488.9960<br>TTY: 800.719.5798 | 1330 Broadway, Suite 500<br>**Oakland**, CA 94612<br>ໂທຣ: 510.267.1200 – ແຟກຊ: 510.267.1201<br>TTY: 800.649.0154 |
| 3580 Wilshire Blvd., Suite #902<br>**Los Angeles**, CA 90010<br>ໂທຣ: 213.427.8747 – ແຟກຊ: 213.427.8767<br>TTY: 800.727.4546 | 1111 Sixth Ave., Suite 200<br>**San Diego**, CA 92101<br>ໂທຣ: 619.239.7861 – ແຟກຊ: 619.239.7906<br>TTY: 800.576.9269 |



ເອກະສານ #5463.12 ເດືອນຕຸລາ 2006


"Advancing the human and legal rights of people with disabilities."

# *ຮ້ວາຍ! ລູກທີ່ຂາດສະມັຖພາບຂອງຂ້ອຍກຳລັງຊິຖືກໄລ່ອອກ!*

# *ຂ້ອຍສາມາດເຮັດຫຍັງໄດ້ແດ່? ສິດທິຂອງລູກຂ້ອຍມີຫຍັງແດ່?*

---

ຖ້າວ່າ ໂຮງຮຽນປະຈຳເຂດ (“ການສຶກສາເຂດ”) ສະເໜີແນະໃຫ້ໄລ່ລູກຂອງທ່ານອອກຈາກໂຮງຮຽນ, ການສຶກສາເຂດຈະຕ້ອງປະຕິບັດຕາມລະບຽບການຕ່າງໆກ່ອນທີ່ຈະໄລ່ນັກຮຽນອອກ. ນອກຈາກນີ້, ກົດໝາຍຂອງຣັຖແລະຣັຖບານກາງວ່າດ້ວຍການສຶກສາພິເສດ ໃຫ້ການປົກປ້ອງບາງຢ່າງ ແກ່ນັກຮຽນທີ່ຂາດສະມັຖພາບຊຶ່ງຖືກຕັດສິນໃຫ້ອອກຈາກໂຮງຮຽນ.

ເອກະສານນີ້ຈະໃຫ້ຂໍ້ມູນເບື້ອງຕົ້ນບາງຢ່າງກ່ຽວກັບ ສິດທິຂອງນັກຮຽນ ຖ້າວ່າເຂົາຖືກຕັດສິນໃຫ້ອອກຈາກໂຮງຮຽນແລະບັນຫາອື່ນໆ ທີ່ກ່ຽວຂ້ອງ.

*ຫົວຂໍ້ຕ່າງໆໃນເອກະສານສະບັບນີ້:*

A. ການໄລ່ອອກແລະການທົບທວນຄຳຕັດສິນເລື້ອງຄວາມປະພຶດ
B. ການອຸທອນໃຫ້ມີການທົບທວນຄຳຕັດສິນເລື້ອງຄວາມປະພຶດ
C. ການພິຈາລະນາຄະດີການໄລ່ອອກໂດຍຄະນະກຳມະການປົກຄອງຂອງໂຮງຮຽນ
D. ການຍື່ນຄຳອຸທອນ
E. ການໄລ່ນັກຮຽນທີ່ຍັງບໍ່ໄດ້ຮັບການພິຈາລະນາໃຫ້ມີສິດຮັບການສຶກສາພິເສດອອກ

*** ຖ້າວ່າລູກຂອງທ່ານຖືກພັກການຮຽນຫລາຍຄັ້ງ ແຕ່ຍັງບໍ່ຖືກຕັດສິນໃຫ້ອອກຈາກໂຮງຮຽນເທື່ອ, ກະຣຸນາເບິ່ງຫລືອ້າງອີງເອກະສານຂອງເຮົາ ກ່ຽວກັບການພັກການຮຽນສຳລັບນັກຮຽນທີ່ມີຄວາມຕ້ອງການພິເສດ, ຊຶ່ງມີຊື່ວ່າ ຮ້ວາຍ! ລູກທີ່ຂາດສະມັຖພາບຂອງຂ້ອຍຄືຖືກພັກການຮຽນຫລາຍເທື່ອແທ້! (EEK! My Child with a Disability Keeps Getting Suspended!)***

## A.   *ການໄລ່ອອກແລະການທົບທວນຄໍາຕັດສິນເລື້ອງຄວາມປະພຶດ*

ໂດຍທົ່ວໄປແລ້ວ, ເມື່ອທາງການສຶກສາເຂດຕັດສິນໃຈທີ່ຈະໄລ່ນັກຮຽນທີ່ໄດ້ຮັບການສຶກສາພິເສດອອກ , ການສຶກສາເຂດຕ້ອງຈັດໃຫ້ມີການປະຊຸມເພື່ອທົບທວນຄໍາຕັດສິນເລື້ອງຄວາມປະພຶດກ່ອນ **ໂດຍບໍ່ໃຫ້ຊ້າກວ່າ 10 ວັນ**[1] ຫລັງຈາກ ການສຶກສາເຂດຕັດສິນໃຈທີ່ຈະເລີ້ມດໍາເນີນການໄລ່ອອກ. ຈຸດປະສົງຂອງການທົບທວນຄໍາຕັດສິນເລື້ອງຄວາມປະພຶດແມ່ນເພື່ອພິຈາລະນາວ່າຄວາມປະພຶດທີ່ນໍາໄປສູ່ການຕັດສິນໃຈທີ່ຈະໄລ່ອອກນັ້ນ ແມ່ນເກີດຈາກການ ຂາດສະມັຖພາບຂອງນັກຮຽນໂດຍກົງແລະຢ່າງເຫັນໄດ້ຊັດຫລືບໍ່, ຫລືເປັນຜົນໂດຍກົງຈາກຄວາມບົກຜ່ອງຂອງໂຮງຮຽນ ທີ່ຈະດໍາເນີນການຕາມໂຄງການ IEP. ບາງຄັ້ງ ການທົບທວນຄໍາຕັດສິນເລື້ອງຄວາມປະພຶດກໍ່ເອີ້ນອີກວ່າ ຫລືມີຊື່ວ່າ "ການຕັດສິນຂອງ IEP ເລື້ອງຄວາມປະພຶດຂອງນັກຮຽນ" ຫລື "ການໄລ່ອອກຢ່າງສຸກເສີນຂອງ IEP."

ຄະນະ IEP ເປັນຜູ້ທົບທວນຄໍາຕັດສິນເລື້ອງຄວາມປະພຶດຂອງນັກຮຽນ, ລວມເຖິງພໍ່ແມ່ນັກຮຽນ ແລະ ບຸກຄົນອື່ນທີ່ມີຄຸນສົມບັດເໝາະສົມ. ທາງຄະນະຈະຕ້ອງພິຈາລະນາຂໍ້ມູນຕ່າງໆ ທີ່ກ່ຽວຂ້ອງ ຊຶ່ງຢູ່ໃນແຟ້ມຂອງນັກຮຽນ, ລວມເຖິງ IEP ຂອງນັກຮຽນ, ການສັງເກດຂອງນາຍຄູ, ຂໍ້ມູນທີ່ກ່ຽວຂ້ອງຕ່າງໆ ຊຶ່ງໄດ້ມາຈາກ ພໍ່ແມ່ຂອງນັກຮຽນ.[2] ອີງຕາມຂໍ້ມູນນີ້, ທາງຄະນະຕ້ອງພິຈາລະນາວ່າ:

1) ຄວາມປະພຶດທີ່ກໍາລັງຖືກກ່າວເຖິງນັ້ນມີສາເຫດຈາກ, ຫລືກ່ຽວພັນໂດຍກົງຢ່າງເຫັນໄດ້ຊັດກັບການຂາດສະມັຖພາບຂອງນັກຮຽນ; ຫລື
2) ຄວາມປະພຶດທີ່ກໍາລັງຖືກກ່າວເຖິງນັ້ນເປັນຜົນໂດຍກົງມາຈາກຄວາມບົກຜ່ອງຂອງການສຶກສາເຂດທີ່ຈະດໍາເນີນການຕາມໂຄງການ IEP.

ຖ້າວ່າ ຂໍ້ 1 ຫລື 2 ຂ້າງເທິງນີ້ແມ່ນເລື້ອງແທ້ສໍາລັບນັກຮຽນ, ໂຮງຮຽນກໍ່ຈະບໍ່ສາມາດໄລ່ນັກຮຽນຜູ້ນັ້ນອອກໄດ້ ແລະຄວາມປະພຶດທີ່ກໍາລັງຖືກກ່າວເຖິງນັ້ນຈະຖືກພິຈາລະນາວ່າເປັນການສະແດງໃຫ້ເຫັນເຖິງການຂາດສະມັຖພາບຂອງນັກຮຽນ.[3]

### ຖ້າວ່າ ຄວາມປະພຶດນັ້ນສະແດງໃຫ້ເຫັນເຖິງການຂາດສະມັຖພາບຂອງນັກຮຽນ

ຖ້າມີການຄົ້ນພົບວ່າ ຄວາມປະພຶດນັ້ນສະແດງໃຫ້ເຫັນເຖິງການຂາດສະມັຖພາບຂອງນັກຮຽນ, ຄະນະ IEP ຕ້ອງດໍາເນີນການ ປະເມີນຜົນກ່ຽວກັບສາເຫດຂອງການປະພຶດນັ້ນໃຫ້

ສຳເລັດ ແລະດຳເນີນການຕາມແຜນການ ຊ່ວຍເຫລືອດ້ານການປະພຶດຕົນຂອງນັກຮຽນ.[4] ຖ້າວ່າ ນັກຮຽນມີແຜນການດັ່ງກ່າວແລ້ວ, ຄະນະ IEP ຕ້ອງທົບທວນ ແລະດັດປັບແຜນການດ້ານ ຄວາມປະພຶດຕາມຄວາມຈຳເປັນ ເພື່ອແກ້ໄຂບັນຫາດ້ານຄວາມປະພຶດ.[5] ການປະເມີນຜົນເພື່ອວິເຄາະ ສາເຫດຂອງການປະພຶດນັ້ນ ຊຶ່ງເຮັດພາຍໃຕ້ກົດຂໍ້ບັງຄັບ California's Hughes Bill[6] ນັ້ນ ຄວນຈະເປັນໄປຕາມ ຂໍ້ກຳນົດຂອງການດຳເນີນການປະເມີນຜົນ ດ້ານສາເຫດຂອງການປະພຶດ ພາຍໃຕ້ ກົດຂໍ້ບັງຄັບຂອງຣັຖບານກາງ. ຄະນະ IEP ຍັງຈະຕ້ອງ ສົ່ງເດັກກັບຄືນໄປບ່ອນຮຽນ ປັດຈຸບັນຂອງເຂົາດ້ວຍ ຍົກເວັ້ນວ່າ ການກະທຳ ຫລືຄວາມປະພຶດນັ້ນ ກ່ຽວຂ້ອງກັບອາວຸດ, ຢາເສບຕິດ ຫລືເຮັດໃຫ້ໃຜຜູ້ໜຶ່ງເກີດການບາດເຈັບທາງ ຮ່າງກາຍຮຸນແຮງ, ຫລືເວັ້ນແຕ່ວ່າ ໂຮງຮຽນ ແລະພໍ່ແມ່ເຫັນດີນຳກັນເປັນແນວອື່ນ.[7]

ຖ້າມີການຄົ້ນພົບວ່າ ຄວາມປະພຶດນັ້ນສະແດງໃຫ້ເຫັນເຖິງ ການຂາດສະມັຖພາບຂອງນັກຮຽນ, ອີງຕາມ ສ່ວນໃດສ່ວນໜຶ່ງ ຫລືທັງໝົດຂອງຂໍ້ທີ 2 ຂ້າງເທິງນີ້ – ວ່າຄວາມປະພຶດທີ່ກຳລັງຖືກກ່າວເຖິງ ນັ້ນ ກ່ຽວຂ້ອງໂດຍກົງຈາກຄວາມບົກພ່ອງຂອງການສຶກສາເຂດ ທີ່ຈະດຳເນີນການຕາມໂຄງການ IEP, ສະນັ້ນ ການສຶກສາເຂດຈະຕ້ອງດຳເນີນການທັນທີທີ່ຈະແກ້ໄຂຂໍ້ບົກພ່ອງ ຫລືບັນຫານັ້ນ.[8]

## ຖ້າວ່າ ຄວາມປະພຶດນັ້ນບໍ່ໄດ້ສະແດງໃຫ້ເຫັນເຖິງການຂາດສະມັຖພາບຂອງນັກຮຽນ

ຖ້າວ່າ ຄະນະ IEP ຕັດສິນວ່າ ຄວາມປະພຶດນັ້ນ**ບໍ່ໄດ້**ສະແດງໃຫ້ເຫັນເຖິງ ການຂາດສະມັຖພາບຂອງນັກຮຽນ, ສະນັ້ນ ການສຶກສາເຂດ ກໍສາມາດດຳເນີນການຕາມຂັ້ນຕອນ ການໄລ່ອອກໄດ້ ແລະຈະສະເໜີແນະໃຫ້ ຄະນກຳມະການການປົກຄອງຂອງການສຶກສາເຂດໄລ່ ນັກຮຽນອອກ. ເມື່ອຄະນະ IEP ຕັດສິນວ່າຄວາມປະພຶດນັ້ນ ບໍ່ໄດ້ສະແດງໃຫ້ເຫັນເຖິງການຂາດ ສະມັຖພາບ, ທາງຄະນະຈະໝາຍເຖິງວ່າ (1) ຄວາມປະພຶດນັ້ນ ບໍ່ໄດ້ມີສາເຫດ ຈາກ, ຫລືກ່ຽວພັນ ໂດຍກົງຢ່າງເຫັນໄດ້ຊັດ ກັບການຂາດສະມັຖພາບຂອງນັກຮຽນ, ແລະ/ຫລື (2) ຄວາມປະພຶດນັ້ນ ບໍ່ໄດ້ເປັນຜົນໂດຍກົງຈາກຄວາມບົກພ່ອງຂອງການສຶກສາເຂດ ທີ່ຈະດຳເນີນການຕາມໂຄງການ IEP ຂອງນັກຮຽນ.

ຖ້າວ່າ ລູກຂອງທ່ານຖືກພັກການຮຽນ ຫລືຖືກຍ້າຍອອກເປັນເວລາ 10 ວັນຕິດຕໍ່ກັນ, ແລະໃນລະຫວ່າງ ຫລື ຫລັງຈາກຊ່ວງການຍ້າຍອອກນັ້ນ ທາງການສຶກສາເຂດຕັດສິນໃຈວ່າ ຢາກສະເໜີແນະໃຫ້ໄລ່ລູກຂອງທ່ານອອກ, ລູກຂອງທ່ານກໍມີສິດທີ່ຈະ ກັບຄືນໄປບ່ອນຮຽນບ່ອນທຳອິດ

ຂອງເຂົາ ຊຶ່ງເປັນບ່ອນທີ່ເກີດການປະພຶດ (ຫລັງຈາກ ຖືກພັກການຮຽນ 10 ວັນຕິດຕໍ່ກັນ ຫລືຄົບກໍານົດຂອງການຍ້າຍອອກແລ້ວ) ໂດຍໃຫ້ຄ້າງການທົບທວນຄໍາຕັດສິນ ເລື້ອງຄວາມປະພຶດຂອງນັກຮຽນໄວ້ກ່ອນ. ມີຂໍ້ຍົກເວັ້ນຄືວ່າ ຖ້າວ່າ ການກະທໍາ ຫລືຄວາມປະພຶດຂອງເຂົາກ່ຽວຂ້ອງກັບອາວຸດ, ຢາເສບຕິດ ຫລືເຮັດໃຫ້ເກີດການບາດເຈັບທາງຮ່າງກາຍຢ່າງຮຸນແຮງ, ຊຶ່ງເປັນກໍລະນີ ທີ່ທາງໂຮງຮຽນສາມາດປ່ຽນບ່ອນຮຽນຂອງເຂົາໄດ້ ໂດຍໃຫ້ເຂົ້າໄປຢູ່ໃນສະຖານສຶກສາສໍາລອງບ່ອນອື່ນໄດ້ເປັນເວລາ 45 ວັນຮຽນ.[9] ຢ່າງໃດກໍຕາມ, ສໍາລັບການປ່ຽນບ່ອນຮຽນໃດໆ ຫລືການໃຫ້ຍ້າຍອອກ ຊຶ່ງມີຈໍານວນຫລາຍກວ່າ 10 ວັນລວມກັນ ໃນປີການສຶກສາໜຶ່ງໆ, ລວມເຖິງ ການອອກຈາກການຖືກພັກການຮຽນ, ລູກຂອງທ່ານຕ້ອງໄດ້ຮັບການສຶກສາສາທາລະນະ ຟຣີ (FAPE) ເຖິງແມ່ນວ່າລູກຂອງທ່ານຈະຢູ່ໃນສະຖານສຶກສາສໍາລອງບ່ອນໃດໜຶ່ງ. ຂໍ້ກໍານົດ FAPE ນີ້ ໝາຍຄວາມວ່າການສຶກສາເຂດຕ້ອງຈັດຫາການບໍລິການຕ່າງໆ, ຕາມຄວາມຈໍາເປັນ, ເພື່ອໃຫ້ນັກຮຽນ ກ້າວໜ້າໃນຫລັກສູດການຮຽນທົ່ວໄປຢ່າງເໝາະສົມ ແລະເພື່ອສ້າງຄວາມກ້າວໜ້າໃຫ້ບັນລຸເປົ້າໝາຍ IEP ຂອງເຂົາ.[10]

ຍົກຕົວຢ່າງ, ສົມມຸດວ່າ ລູກຊາຍຂອງທ່ານໄດ້ຖືກລົງໂທດແລ້ວ ໂດຍຖືກພັກການຮຽນເປັນເວລາ 10 ວັນ ຕິດຕໍ່ກັນຕາມວັນຮຽນ ສໍາລັບການປະພຶດຮ້າຍ, ແລະໃນວັນທີ່ 10 ຂອງການອອກຈາກການຖືກພັກການຮຽນ, ການສຶກສາເຂດໄດ້ແຈ້ງໃຫ້ທ່ານຮູ້ວ່າ ລູກຊາຍຂອງທ່ານກໍາລັງຖືກຕັດສິນໃຫ້ອອກຈາກໂຮງຮຽນ ເນື່ອງຈາກ ມີຄວາມປະພຶດຮ້າຍ. ດຽວນີ້ ການສຶກສາເຂດມີເວລາ 10 ວັນ ທີ່ຈະຈັດໃຫ້ມີການປະຊຸມ ເພື່ອທົບທວນຄໍາຕັດສິນເລື້ອງຄວາມປະພຶດຂອງນັກຮຽນ ຮ່ວມກັບທ່ານ ແລະສະມາຊິກທີ່ກ່ຽວຂ້ອງໃນຄະນະ IEP. ສໍາລັບຈຸດປະສົງຂອງຕົວຢ່າງນີ້, ສົມມຸດວ່າ ຄວາມປະພຶດຮ້າຍຂອງນັກຮຽນນັ້ນບໍ່ໄດ້ເປັນສາເຫດໃຫ້ເກີດການບາດເຈັບຮຸນແຮງ ແລະບໍ່ໄດ້ກ່ຽວຂ້ອງກັບ ຢາເສບຕິດ ຫລືອາວຸດ, ຊຶ່ງໝາຍຄວາມວ່າໃນຂະນະທີ່ ລໍຖ້າຜົນການປະຊຸມເພື່ອທົບທວນຄໍາຕັດສິນເລື້ອງຄວາມປະພຶດ ແລະຕະຫລອດທັງຂັ້ນຕອນຂອງການພິຈາລະນາຕັດສິນນັ້ນ, ລູກຊາຍຂອງທ່ານສາມາດຢູ່ໃນບ່ອນຮຽນປົກກະຕິຂອງເຂົາໄດ້.ໃນລະຫວ່າງການປະຊຸມເພື່ອຕັດສິນຄວາມປະພຶດນັ້ນ, ຖ້າວ່າ ຄະນະ IEP ພົບວ່າຄວາມປະພຶດຮ້າຍຂອງລູກຊາຍຂອງທ່ານນັ້ນ ກ່ຽວພັນໂດຍກົງຕໍ່ ແລະ/ຫລື ມີສາເຫດຈາກການຂາດສະມັດຖະພາບຂອງເຂົາ, ການສຶກສາເຂດ ຈະບໍ່ສາມາດໄລ່ເຂົາອອກໄດ້. ນອກຈາກນີ້, ການສຶກສາເຂດຕ້ອງຈັດໃຫ້ມີການປະເມີນຜົນ ກ່ຽວກັບສາເຫດຄວາມປະພຶດ ແລະພັດທະນາແຜນການຊ່ວຍເຫລືອ ດ້ານການປະພຶດຕົນຂອງລູກຊາຍຂອງທ່ານ ຖ້າວ່າ ລູກຊາຍຂອງ

ທ່ານຍັງບໍ່ໄດ້ຮັບການປະເມີນຜົນ ກ່ຽວກັບສາເຫດຂອງຄວາມປະພຶດນັ້ນ ແລະຍັງບໍ່ມີແຜນການຊ່ວຍເຫລືອດ້ານຄວາມປະພຶດ. ເຖິງແມ່ນວ່າ ລູກຊາຍຂອງທ່ານຈະມີ ແຜນການດ້ານຄວາມປະພຶດແລ້ວກໍຕາມ, ແຕ່ທາງຄະນະ IEP ກໍຕ້ອງທົບທວນແຜນການນັ້ນ ແລະດັດປັບຕາມຄວາມຈຳເປັນເພື່ອແກ້ໄຂຄວາມປະພຶດຮ້າຍ ທີ່ພາໃຫ້ເຂົາ ຖືກພິຈາລະນາໄລ່ອອກ.[11]

ໃນຕົວຢ່າງຂ້າງເທິງນີ້, ຖ້າວ່າ ຄວາມປະພຶດຮ້າຍນັ້ນຍັງເຮັດໃຫ້ນັກຮຽນລຸ້ນດຽວກັນບາດເຈັບທາງຮ່າງກາຍຢ່າງຮຸນແຮງ, ການສຶກສາເຂດສາມາດຈັດໃຫ້ເຂົາເຂົ້າຢູ່ໃນບ່ອນຮຽນສຳລອງໄດ້ເປັນເວລາ 45 ວັນຕາມວັນຮຽນ, ຊຶ່ງເປັນບ່ອນທີ່ລູກຊາຍຂອງທ່ານຈະຢູ່ຕະຫລອດລະຍະເວລາ ແລະຫລັງຈາກ ສິ້ນສຸດຂັ້ນຕອນການຕັດສິນເລື້ອຄວາມປະພຶດ, ຍົກເວັ້ນວ່າຜູ້ພິພາກສາ ຫລືເຈົ້າໜ້າທີ່ພິຈາລະນາຄະດີ ມີຄຳສັ່ງແນວອື່ນ. ຖ້າວ່າ ລູກຊາຍຂອງທ່ານໄດ້ຖືກພັກການຮຽນ 3 ວັນແລ້ວ ຍ້ອນເຫດການອື່ນ ຊຶ່ງເກີດຂຶ້ນກ່ອນໜ້ານັ້ນໃນປີການສຶກສາດຽວກັນນັ້ນ, ສະນັ້ນ ເລີ້ມແຕ່ວັນທີ 8 ຈາກຈຳນວນ 10 ວັນທີ່ຖືກພັກການຮຽນຍ້ອນການປະພຶດໃນຕົວຢ່າງນີ້, ການສຶກສາເຂດຈະຕ້ອງຈັດຫາ FAPE ໃຫ້ລູກຂອງທ່ານ. ເພີ່ມຕ້ອງຈັດຫາ FAPE ໃຫ້ໃນວັນທີ່ເຫລືອຂອງວັນພັກການຮຽນ ແລະຕະຫລອດທັງ 45 ວັນຕາມວັນຮຽນໃນບ່ອນຮຽນສຳລອງ.

## **B.** *ການອຸທອນໃຫ້ມີການທົບທວນຄຳຕັດສິນເລື້ອງຄວາມປະພຶດ ໂດຍຜ່ານການພິຈາລະນາຄະດີຕາມຂັ້ນຕອນແບບຮີບດ່ວນ*

ຖ້າວ່າ ການສຶກສາເຂດພິຈາລະນາເຫັນວ່າ ຄວາມປະພຶດທີ່ຖືກກ່າວຫາ ຊຶ່ງພາໃຫ້ເກີດການຕັດສິນຂອງການສຶກສາເຂດທີ່ຈະໃຫ້ໄລ່ລູກຂອງທ່ານອອກນັ້ນ **ບໍ່**ສະແດງໃຫ້ເຫັນເຖິງການຂາດສະມັດຖພາບຂອງເຂົາ ແລະຕັດສິນ ທີ່ຈະປ່ຽນບ່ອນຮຽນຂອງລູກທ່ານ, ການສຶກສາເຂດຕ້ອງແຈ້ງໃຫ້ທ່ານຊາບເຖິງການຕັດສິນນີ້. ການສຶກສາເຂດຍັງຕ້ອງໃຫ້ແຈ້ງການກ່ຽວກັບລະບຽບການຄຸ້ມຄອງສິດທິດ້ວຍ.[12]

ຖ້າວ່າ ທ່ານບໍ່ເຫັນດີນຳການຕັດສິນຂອງການສຶກສາເຂດ, ທ່ານມີສິດທີ່ຈະອຸທອນຄຳຕັດສິນຜ່ານຂັ້ນຕອນ ການພິຈາລະນາຄະດີຕາມຂັ້ນຕອນດ້ານການສຶກສາພິເສດແບບຮີບດ່ວນ. ຢູ່ທີ່ການພິຈາລະນາຄະດີແບບຮີບດ່ວນນັ້ນ, ເຈົ້າໜ້າທີ່ທີ່ເປັນກາງຈະກວດສອບຄືນວ່າ ຄວາມປະພຶດຂອງລູກທ່ານນັ້ນ ມີສາເຫດຈາກ, ຫລືມີຄວາມກ່ຽວພັນໂດຍກົງຢ່າງເຫັນໄດ້ຊັດ ກັບຄວາມບົກຜ່ອງຂອງການສຶກສາເຂດທີ່ຈະດຳເນີນການຕາມໂຄງການ IEP ຫລືບໍ່. ການພິຈາລະນາຄະດີແບບຮີບດ່ວນ

ຄວນຈັດໃຫ້ມີຂຶ້ນພາຍໃນ 20 ວັນຕາມວັນຣຖມ ນັບແຕ່ມີການຮ້ອງຂໍໃຫ້ມີການ ພິຈາລະນາຄະດີ ແລະທ່ານຄວນໄດ້ຮັບຄຳຕັດສິນຂັ້ນເດັດຂາດ ຈາກເຈົ້າໜ້າທີ່ພິຈາລະນາຄະດີພາຍໃນ 10 ວັນຣຖມ ຫລັງຈາກສິ້ນສຸດການພິຈາລະນາຄະດີແລ້ວ.[13] ພາຍໃນ 7 ວັນ ຫລັງຈາກຍື່ນຄຳຮ້ອງຂໍໃຫ້ມີການ ພິຈາລະນາຄະດີ ແບບເລັ່ງດ່ວນ, ກົດໝາຍກຳນົດວ່າ ໂຮງຣຖມ ແລະພໍ່ແມ່ນັກຣຖມຕ້ອງພົບປະກັນ ເພື່ອຊ່ວຍກັນແກ້ໄຂບັນຫາ ທີ່ອຸທອນໄປນັ້ນ, ເວັ້ນແຕ່ວ່າ ທັງພໍ່ແມ່ ແລະໂຮງຣຖມເຫັນດີນຳກັນ ເປັນລາຍລັກອັກສອນ ທີ່ຈະບໍ່ເຮັດແນວນັ້ນ.[14]

ຖ້າວ່າ ທ່ານຍື່ນຂໍໃຫ້ມີການພິຈາລະນາຄະດີແບບຮີບດ່ວນ ຍ້ອນວ່າທ່ານບໍ່ເຫັນດີນຳຄຳຕັດສິນ ເລື້ອງຄວາມປະພຶດ ແລະ/ຫລືການປ່ຽນບ່ອນຣຖມ ແລະລູກຂອງທ່ານໄດ້ຖືກສົ່ງໄປບ່ອນຣຖມສຳລອງ ຊົ່ວຄາວ, ລູກຂອງທ່ານຈະຄົງຢູ່ໃນບ່ອນຣຖມສຳລອງຊົ່ວຄາວ ຕະຫລອດລະຍະເວລາທີ່ດຳເນີນການ ພິຈາລະນາຄະດີ. ຖ້າວ່າຊ່ວງເວລາ ທີ່ຢູ່ໃນບ່ອນຣຖມສຳລອງນັ້ນຄົບກຳນົດ ກ່ອນທີ່ການພິຈາລະນາຄະດີ ຈະສິ້ນສຸດ, ລູກຂອງທ່ານກໍຈະຖືກສົ່ງກັບຄືນໄປ ທີ່ບ່ອນຣຖມປົກກະຕິຂອງເຂົາ, ເວັ້ນແຕ່ວ່າທ່ານ ແລະການສຶກສາເຂດເຫັນດີນຳກັນເປັນແນວອື່ນ. ຖ້າບໍ່ດັ່ງນັ້ນ, ຖ້າວ່າ ການສຶກສາເຂດບໍ່ສົ່ງລູກ ຂອງທ່ານໄປທີ່ບ່ອນຣຖມສຳລອງຊົ່ວຄາວເພື່ອເປັນການລົງໂທດ, ລູກຂອງທ່ານກໍຈະຄົງຢູ່ ທີ່ບ່ອນຣຖມປົກກະຕິຂອງລາວຕະຫລອດລະຍະຂອງການພິຈາລະນາຄະດີ.[15]

ທ່ານຈະຕ້ອງຍື່ນຄຳຮ້ອງຂໍໃຫ້ມີ ການພິຈາລະນາຄະດີໃຫ້ໄວເທົ່າທີ່ຈະໄວໄດ້ *ກ່ອນ*ວັນທີທີ່ກຳນົດໄວ້ ສຳລັບການພິຈາລະນາຄະດີເລື້ອງ ການໄລ່ອອກຂອງການສຶກສາເຂດກັບ ຄະນະກຳມະການປົກຄອງຂອງການສຶກສາເຂດ (“ຄະນະກຳມະການ”). ເຫດຜົນທີ່ທ່ານຕ້ອງການ ຍື່ນຄຳຮ້ອງຂໍໃຫ້ມີການພິຈາລະນາຄະດີຕາມຂັ້ນຕອນ ກ່ອນທີ່ທ່ານ ຈະໄປປາກົດຕົວຕໍ່ໜ້າ ຄະນະກຳມະການນັ້ນ ກໍເນື່ອງຈາກວ່າ ທ່ານຕ້ອງການທີ່ຈະຂໍໃຫ້ເຈົ້າໜ້າທີ່ພິຈາລະນາຄະດີ ອອກຄຳສັ່ງສານວ່າ ບໍ່ໃຫ້ການສຶກສາເຂດດຳເນີນການພິຈາລະນາຄະດີເລື້ອງການໄລ່ອອກ ໃນຂະນະ ທີ່ທ່ານກຳລັງຂໍໃຫ້ມີການພິຈາລະນາຄະດີແບບຮີບດ່ວນ, ແລະເຈົ້າໜ້າທີ່ພິຈາລະນາຄະດີ ຕ້ອງໃຊ້ ເວລາໃນການດຳເນີນການ ຕໍ່ຄຳຮ້ອງນັ້ນ ແລະອອກຄຳສັ່ງແກ່ການສຶກສາເຂດ ໃຫ້ເລື່ອນການ ພິຈາລະນາຄະດີເລື້ອງການໄລ່ອອກ ອອກໄປກ່ອນ ຈົນກວ່າ ຫລັງຈາກການພິຈາລະນາຄະດີຕາມຂັ້ນຕອນ ຈະສິ້ນສຸດລົງ ແລະມີການອອກຄຳຕັດສິນ. ຖ້າວ່າ ໄດ້ມີການກຳນົດວັນທີ ທີ່ຈະໄປປາກົດຕົວຕໍ່ໜ້າ ຄະນະກຳມະການແລ້ວ, ທ່ານຍັງສາມາດຍື່ນຄຳຮ້ອງຂໍໃຫ້ມີການພິຈາລະນາຄະດີ ແບບຮີບດ່ວນ ຫລັງຈາກໄປປາກົດຕົວຕໍ່ໜ້າແລ້ວ, ແຕ່ຂໍຊ້ຳອີກວ່າ, ທ່ານຈະຕ້ອງເຮັດແນວນີ້ ໃຫ້ໄວເທົ່າທີ່

ຈະໄວໄດ້. ຂໍ້ມູນເພີ້ມເຕີມກ່ຽວກັບ ການພິຈາລະນາຄະດີຕາມຂັ້ນຕອນ ແລະການໄລ່ອອກນັ້ນ ທ່ານສາມາດເບິ່ງໄດ້ໃນບົດທີ 6 ແລະ 8 ຂອງຄູ່ມື PAI ຊຶ່ງວ່າດ້ວຍ *ສິດທິດ້ານການສຶກສາພິເສດ ແລະຄວາມຮັບຜິດຊອບຕ່າງໆ (Special Education Rights and Responsibilities, SERR)*.[16]

ເນື່ອງຈາກເປັນຜົນມາຈາກ ການພິຈາລະນາຄະດີຕາມຂັ້ນຕອນ, ເຈົ້າໜ້າທີ່ພິຈາລະນາຄະດີ ສາມາດສັ່ງໃຫ້ມີການປ່ຽນແປງໃນການຈັດບ່ອນຮຽນໃຫ້ນັກຮຽນໄດ້. ເຈົ້າໜ້າທີ່ພິຈາລະນາຄະດີ ອາດພົບວ່າຄວາມປະພຶດນັ້ນ ສະແດງໃຫ້ເຫັນເຖິງ ການຂາດສະມັດຖພາບຂອງເດັກ ແລະສັ່ງໃຫ້ ໂຮງຮຽນພາເດັກຄືນໄປບ່ອນຮຽນເກົ່າຂອງເຂົາ ໄດ້. ສໍາລັບບັນດານັກຮຽນທີ່ຖືກຍ້າຍອອກຈາກບ່ອນ ຮຽນເກົ່າຂອງເຂົາ ໂດຍເຈົ້າໜ້າທີ່ໂຮງຮຽນເນື່ອງຈາກວ່າ ມີຄວາມປະພຶດທີ່ກ່ຽວຂ້ອງກັບອາວຸດ, ຢາເສບຕິດ, ຫລືເຮັດໃຫ້ເກີດການບາດເຈັບທາງຮ່າງກາຍຮຸນແຮງ, ຫລືເນື່ອງຈາກສານພົບວ່າ ຄວາມປະພຶດນັ້ນບໍ່ໄດ້ສະແດງໃຫ້ເຫັນເຖິງ ການຂາດສະມັດຖພາບຂອງນັກຮຽນ, ເຈົ້າໜ້າທີ່ ພິຈາລະນາຄະດີ ອາດພົບວ່າຄວາມປະພຶດບໍ່ໄດ້ກໍ່ໃຫ້ເກີດການກະທໍາຜິດ ດ້ານອາວຸດ, ຢາເສບຕິດ, ຫລືການບາດເຈັບ ທາງຮ່າງກາຍຮຸນແຮງ ແລະສັ່ງໃຫ້ພານັກຮຽນກັບຄືນໄປບ່ອນຮຽນເກົ່າທີ່ ເຈົ້າໜ້າທີ່ໂຮງຮຽນໄດ້ຍ້າຍເຂົາອອກມາ.[17]

ໃນຖານະຕົວຢ່າງ, ສົມມຸດວ່າ ລູກສາວຂອງທ່ານ, ຊຶ່ງຢູ່ໃນໂຄງການການສຶກສາພິເສດ, ຂວ້າງສໍຕົກຖືກໃສ່ນາຍຄູ. ການສຶກສາເຂດອ້າງວ່າ ເຫດການນີ້ເປັນການກະທໍາຜິດທີ່ກ່ຽວຂ້ອງ ກັບອາວຸດ, ດັ່ງນັ້ນຈຶ່ງຍ້າຍລູກສາວຂອງທ່ານໄປຢູ່ບ່ອນຮຽນໃໝ່, ແລະໃຫ້ມີການທົບທວນຄໍາ ຕັດສິນເລື້ອງຄວາມປະພຶດ, ການສຶກສາເຂດຕັດສິນວ່າ ການກະທໍາຂວ້າງສໍນັ້ນ ບໍ່ສະແດງໃຫ້ເຫັນ ເຖິງການຂາດສະມັດຖພາບ ຂອງລູກສາວຂອງທ່ານ. ແຕ່ທ່ານບໍ່ເຫັນດີນໍາ. ທ່ານເຊື່ອວ່າ (1) ສໍນັ້ນບໍ່ແມ່ນອາວຸດ,(2) ການກະທໍາຂວ້າງສໍໃສ່ນັ້ນ ແມ່ນກ່ຽວພັນໂດຍກົງຕໍ່ການຂາດສະມັດຖພາບ ຂອງລູກສາວຂອງທ່ານ, ແລະ (3) ການຂວ້າງສໍໃສ່ນັ້ນເປັນຜົນໂດຍກົງຈາກຄວາມບົກຜ່ອງຂອງການ ສຶກສາເຂດ ທີ່ຈະດໍາເນີນການຕາມແຜນການດ້ານຄວາມປະພຶດ ແລະໂຄງການ IEP ຂອງລູກທ່ານ. ເນື່ອງຈາກທ່ານບໍ່ເຫັນ ດ້ວຍ, ທ່ານຈຶ່ງຍື່ນຄໍາຮ້ອງຂໍໃຫ້ມີການພິຈາລະນາຄະດີຕາມຂັ້ນຕອນແບບ ຮີບດ່ວນ. ຢູ່ທີ່ການພິຈາລະນາຄະດີ, ຖ້າວ່າ ເຈົ້າໜ້າທີ່ພິຈາລະນາຄະດີຕັດສິນວ່າ ສໍນັ້ນບໍ່ແມ່ນອາວຸດ ແລະວ່າການກະທໍາຂອງເຂົານັ້ນ ກ່ຽວພັນໂດຍກົງຕໍ່ການຂາດສະມັດຖພາບ, ເຈົ້າໜ້າທີ່ສາມາດສັ່ງໃຫ້ ການສຶກສາເຂດຍ້າຍລູກຂອງທ່ານກັບຄືນມາບ່ອນຮຽນປົກກະຕິຂອງເຂົາ ແລະຢຸດການກະທໍາຂອງ ການສຶກສາເຂດ ທີ່ຈະຂັບໄລ່ລູກສາວຂອງທ່ານອອກ. ນອກຈາກນີ້, ຖ້າວ່າ ເຈົ້າໜ້າທີ່ພິຈາລະນາຄະດີ

ຍັງຕັດສິນວ່າ ແຜນການຄວາມປະພຶດບໍ່ຖືກດຳເນີນການຢ່າງເໝາະສົມ, ເຈົ້າໜ້າທີ່ພິຈາລະນາຄະດີ ສາມາດສັ່ງໃຫ້ຄະນະ IEP ມາພົບ ແລະດັດປັບແຜນການດ້ານຄວາມປະພຶດໄດ້.

ໃນສະຖານະການຕ່າງໆ ຊຶ່ງນັກຮຽນຍັງຢູ່ໃນບ່ອນຮຽນເກົ່າຂອງເຂົາ ເນື່ອງຈາກຄວາມປະພຶດບໍ່ກ່ຽວຂ້ອງກັບອາວຸດ, ຢາເສບຕິດ ຫລືການເຮັດໃຫ້ເກີດການບາດເຈັບທາງຮ່າງກາຍຮຸນແຮງ (ຫລືເນື່ອງຈາກຄະນະ IEP ຕັດສິນວ່າ ຄວາມປະພຶດນັ້ນບໍ່ສະແດງໃຫ້ເຫັນເຖິງການຂາດສະມັຖພາບຂອງເດັກ), ເຈົ້າໜ້າທີ່ພິຈາລະນາຄະດີ ສາມາດສັ່ງໃຫ້ປ່ຽນບ່ອນຮຽນຂອງນັກຮຽນໄດ້ ໂດຍໃຫ້ໄປຢູ່ບ່ອນຮຽນສຳລອງຊົ່ວຄາວເປັນເວລາເຖິງ 45 ວັນຕາມ ວັນຮຽນ ຖ້າວ່າເຈົ້າໜ້າທີ່ພິຈາລະນາຄະດີພົບວ່າ ການໃຫ້ນັກຮຽນຢູ່ໃນບ່ອນຮຽນປັດຈຸບັນຕໍ່ໄປຈະສິ່ງຜົນເຮັດໃຫ້ເກີດການບາດເຈັບຢ່າງເຫັນໄດ້ຊັດຕໍ່ນັກຮຽນ ຫລືຜູ້ອື່ນໆ, ເຖິງແມ່ນວ່າ ຖ້າວ່າຄວາມປະພຶດບໍ່ໄດ້ສະແດງໃຫ້ເຫັນເຖິງການຂາດສະມັຖພາບຂອງນັກຮຽນ. ໃນລະຫວ່າງ 45 ວັນຕາມວັນຮຽນນັ້ນ, ຖ້າວ່າບໍ່ມີການຕັດສິນກ່ຽວກັບ ບ່ອນຮຽນຖາວອນສຳລັບນັກຮຽນ, ໂຮງຮຽນສາມາດຮ້ອງຂໍໃຫ້ມີການພິຈາລະນາຄະດີອີກອັນໜຶ່ງ ຊຶ່ງຈະຂໍໃຫ້ມີຄຳສັ່ງສານຈາກເຈົ້າໜ້າທີ່ພິຈາລະນາຄະດີ ທີ່ຈະຈັດໃຫ້ນັກຮຽນຢູ່ໃນບ່ອນຮຽນສຳລອງຊົ່ວຄາວເພີ້ມອີກເປັນເວລາ 45 ວັນ ຕາມວັນຮຽນ.[18]

ຖ້າວ່າ ທ່ານບໍ່ປະສົບຄວາມສຳເລັດ ຫລືບໍ່ພໍໃຈກັບຄຳຕັດສິນຂອງເຈົ້າໜ້າທີ່ພິຈາລະນາຄະດີໃນການພິຈາລະນາຄະດີຕາມຂັ້ນຕອນແບບຮີບດ່ວນ, ທ່ານມີສິດທີ່ຈະຍື່ນອຸທອນຄຳຕັດສິນນັ້ນໄດ້.[19]

### *C. ການພິຈາລະນາຄະດີກ່ຽວກັບການໄລ່ອອກໂດຍຄະນະກຳມະການປົກຄອງຂອງໂຮງຮຽນ*

ການສຶກສາເຂດຕັດສິນທີ່ຈະສະເໜີແນະໃຫ້ມີການໄລ່ອອກ, ການສຶກສາເຂດຈະແນະນຳໃຫ້ທ່ານ ແລະລູກຂອງທ່ານໄປຫາ ຄະນະກຳມະການປົກຄອງຂອງການສຶກສາເຂດ ("ຄະນະກຳມະການ") ເພື່ອພິຈາລະນາຕັດສິນວ່າ ລູກຊາຍ/ລູກສາວຂອງທ່ານຄວນຖືກໄລ່ອອກບໍ່. ການພິຈາລະນາຄະດີຮ່ວມກັບ ຄະນະກຳມະການ ຈະຖືກຈັດໃຫ້ມີຂຶ້ນພາຍໃນ 30 ວັນຕາມວັນຮຽນ[20] ຫລັງຈາກຜູ້ອຳນວຍການໂຮງຮຽນຕັດສິນທີ່ຈະໄລ່ລູກຂອງທ່ານອອກ, ແລະຄະນະກຳມະການຈະຖືກຮຽກຮ້ອງໃຫ້ຕັດສິນພາຍໃນ 10 ວັນຕາມວັນຮຽນ ຫລັງການພິຈາລະນາຄະດີຂອງຄະນະກຳມະການ, ເວັ້ນແຕ່ວ່າ ທ່ານຮ້ອງຂໍໃຫ້ມີການເລື່ອນການພິຈາລະນາຄະດີ ຫລືການຕັດສິນ ໂດຍຂຽນເປັນລາຍລັກອັກສອນ.[21] ກະຣຸນາຊາບວ່າ ການພິຈາລະນາຄະດີນີ້ແຕກຕ່າງຫລາຍ ຈາກການພິຈາລະນາຄະດີຕາມຂັ້ນຕອນ ຊຶ່ງໄດ້ບັນຍາຍໄວ້ໃນພາກ B ຂ້າງເທິງ.

ຖ້າວ່າ ທ່ານບໍ່ພໍໃຈກັບການພິຈາລະນາຄະດີຕາມຂັ້ນຕອນແບບຮີບດ່ວນ, ແລະຄະນະກຳມະການຍັງສະເໜີແນະ ແລະຕັດສິນທີ່ຈະໄລ່ລູກຂອງທ່ານອອກ, ທ່ານມີສິດທີ່ຈະອຸທອນຄຳຕັດສິນຂອງຄະນະກຳມະການ. ຫລັງການຕັດສິນຂອງຄະນະກຳມະການ ທ່ານມີເວລາ 30 ວັນ ທີ່ຈະຍື່ນຄຳອຸທອນຕໍ່ຄະນະກຳມະການ ດ້ານການສຶກສາ ປະຈຳຄາວຕີ້.[22]

ມີກົດລະບຽບຫລາຍຢ່າງກ່ຽວກັບ ການສະເໜີແນະໃຫ້ມີການໄລ່ອອກ ແລະການຮັບນັກຮຽນກັບຄືນໃໝ່ຫລັງຈາກໄລ່ອອກແລ້ວ, ແລະກົດລະບຽບເຫລົ່ານີ້*ອາດແຕກຕ່າງ*ກັນໄປໃນແຕ່ລະການສຶກສາເຂດ. ທ່ານຄວນຕິດຕໍ່ ການສຶກສາເຂດຂອງລູກທ່ານ ເພື່ອຂໍເອົາສຳເນົາຂອງເອກະສານກົດລະບຽບ ແລະນະໂຍບາຍຕ່າງໆ. ຂໍ້ມູນເພີ້ມເຕີມ ກ່ຽວກັບກົດລະບຽບຕ່າງໆ ສາມາດເບິ່ງໄດ້ໃນ Cal. Ed. Code §§ 48916–48927.

## D. *ການຍື່ນຄຳອຸທອນ*

ກະຣຸນາຮັບຮູ້ວ່າ ມີກຳນົດວັນສຸດທ້າຍທີ່ສຳຄັນໆ ໃນການຍື່ນຄຳຮ້ອງ ຊຶ່ງຈະນຳໃຊ້ກັບຄຳຮ້ອງອຸທອນເລື້ອງການຕັດສິນຄວາມປະພຶດຂອງລູກທ່ານ ແລະຂັ້ນຕອນການໄລ່ອອກ. ດັ່ງນັ້ນ ພວກເຮົາຂໍແນະນຳໃຫ້ທ່ານຊອກຫາ ຄຳປຶກສາຫາລືທາງກົດໝາຍກ່ຽວກັບ ກຳນົດວັນສຸດທ້າຍທີ່ສຳຄັນເຫລົ່ານີ້ໃຫ້ໄວທີ່ສຸດ. ຖ້າວ່າທ່ານຕ້ອງການຊອກຫາ ການຊ່ວຍເຫລືອເພີ້ມເຕີມ ຫລືການມີຕົວແທນ, ທ່ານຄວນຕິດຕໍ່, ຫ້ອງການດູແລດ້ານການພິຈາລະນາຄະດີ (Office of Administrative Hearings, OAH) ແລະຂໍລາຍຊື່ທະນາຍຄວາມ ແລະ/ຫລື ຜູ້ຮັກສາ ຜົນປະໂຫຍດຊຶ່ງຊ່ຽວຊານໃນການຮັກສາຜົນປະໂຫຍດ ດ້ານການສຶກສາພິເສດ. ຂໍ້ມູນສຳລັບຕິດຕໍ່ມີຢູ່ຂ້າງລຸ່ມນີ້:

Office of Administrative Hearings
Special Education Division
2349 Gateway Oaks Drive, Suite 200
Sacramento, CA 95833-4231
ໂທຣ: 916-263-0880
ແຟກຊ: 916-263-0890

ທ່ານສາມາດພົບຟອມຄຳຮ້ອງຂໍໃຫ້ມີການໄກ່ເກັ່ຽແລະການພິຈາລະນາຄະດີ (Mediation and Hearing Request) ໄດ້ໃນໜ້າການສຶກສາພິເສດໃນເວັບໄຊຂອງ OAH.[23]

ເລີ້ມແຕ່ເດືອນຕຸລາ ປີ 2006, ຟອມເຫລົ່ານີ້ຈະມີໃນພາສາອັງກິດ ແລະພາສາສະເປນ. ໃນເວັບໄຊ, OAH ກໍມີເອກະສານລະບຽບການປົກປ້ອງສິດທິຂອງພໍ່ແມ່ (Parents' Rights and Procedural Safeguards) ເປັນພາສາອັງກິດ, ສະເປນ, ຕາກາລ໋ອກ, ມົ້ງ ແລະ ວຽດນາມ. ຖ້າວ່າ ທ່ານບໍ່ມີອິນເຕີເນັດ, ທ່ານສາມາດໂທຣໄປທີ່ຫ້ອງການ OAH ໄດ້ໂດຍກົງແລະຂໍສຳເນົາຂອງເອກະສານເຫລົ່ານີ້, ຫລືທ່ານສາມາດໂທຣໄປທີ່ ການສຶກສາເຂດປະຈຳເຂດຂອງທ່ານໄດ້.

## E. *ການໄລ່ນັກຮຽນທີ່ຍັງບໍ່ໄດ້ຮັບການພິຈາລະນາໃຫ້ມີສິດຮັບການສຶກສາພິເສດອອກ*

ຖ້າວ່າ ການສຶກສາເຂດ ບໍ່ປະເມີນຜົນລູກຂອງທ່ານສຳລັບການສຶກສາພິເສດ, ແລະທ່ານຮູ້ສຶກວ່າ ເຂົາມີສິດເໝາະສົມທີ່ຈະໄດ້ຮັບ, ລູກຂອງທ່ານກໍມີສິດທີ່ຈະໄດ້ຮັບການປົກປ້ອງແບບດຽວກັນກ່ອນທີ່ຈະຖືກໄລ່ອອກຊຶ່ງເປັນສິດຂອງນັກຮຽນໃນໂຄງການການສຶກສາພິເສດ ***ຖ້າວ່າ*** ທ່ານສາມາດພິສູດໄດ້ວ່າ ການສຶກສາເຂດຮູ້ລ່ວງໜ້າຢູ່ແລ້ວວ່າ ລູກຂອງທ່ານຂາດສະມັຖພາບ **ກ່ອນທີ່**ຄວາມປະພຶດທີ່ພາໃຫ້ເກີດການລົງໂທດຈະເກີດຂຶ້ນ. ການສຶກສາເຂດ ຄວນຈະຮູ້ກ່ຽວກັບ ການຂາດສະມັຖພາບຂອງລູກທ່ານ ກ່ອນທີ່ຈະເກີດການປະພຶດທີ່ບໍ່ດີ ຖ້າວ່າ, ກ່ອນຈະເກີດການປະພຶດທີ່ບໍ່ດີ, ຂໍ້ໃດໜຶ່ງຕໍ່ໄປນີ້ແມ່ນຄວາມຈິງ[24]:

1) ທ່ານໄດ້ສະແດງຂໍ້ກັງວົນໃຈ, ໂດຍຂຽນເປັນລາຍລັກອັກສອນ, ເຖິງນາຍຄູ ຫລື ເຈົ້າໜ້າທີ່ຂອງໂຮງຮຽນ, ວ່າລູກຂອງທ່ານຕ້ອງການການສຶກສາພິເສດ (ແຕ່ມີຂໍ້ຍົກເວັ້ນ ຖ້າວ່າພໍ່ແມ່ບໍ່ຮູ້ໜັງສື ຫລືມີຄວາມພິການຊຶ່ງເປັນອຸປະສັກເຮັດໃຫ້ບໍ່ສາມາດຂຽນໜັງສືສະແດງຄວາມກັງວົນໃຈໄດ້),
2) ທ່ານໄດ້ຮ້ອງຂໍວ່າ ໃຫ້ລູກຂອງທ່ານໄດ້ຮັບການປະເມີນຜົນສຳລັບການສຶກສາພິເສດ, ຫລື
3) ນາຍຄູ ຫລືເຈົ້າໜ້າທີ່ອື່ນຂອງໂຮງຮຽນ ໄດ້ສະແດງຄວາມກັງວົນໃຈກ່ຽວກັບຄວາມປະພຶດ ຫລືການກະທຳຂອງເດັກ ຕໍ່ເຈົ້າໜ້າທີ່ດ້ານການສຶກສາພິເສດ ຫລື ເຈົ້າໜ້າທີ່ກວດກາໃນໂຮງຮຽນປະຈຳເຂດ.

ຖ້າທ່ານຫາກຮູ້ສຶກວ່າ ການສຶກສາເຂດຮູ້ຢູ່ແລ້ວ ເຖິງການຂາດສະມັຖພາບຂອງລູກທ່ານກ່ອນໜ້າທີ່ຈະມີການ ຕັດສິນຂອງການສຶກສາເຂດທີ່ຈະໄລ່ລູກຂອງທ່ານອອກ, ທ່ານມີສິດທີ່ຈະຍື່ນຂໍໃຫ້ມີການ ພິຈາລະນາຄະດີຕາມຂັ້ນຕອນ ເພື່ອສະເໜີຄຳຄັດຄ້ານຂອງທ່ານ. ທ່ານຄວນຮ້ອງຂໍໃຫ້ມີການພິຈາລະນາຄະດີແບບຮີບດ່ວນ ແລະຍື່ນຄຳຮ້ອງໃຫ້ໄວທີ່ສຸດ ແລະລວມເອົາຫລັກ

ຖານທີ່ເປັນລາຍລັກອັກສອນທັງໝົດ ທີ່ບົ່ງເຖິງຂໍ້ໃດໜຶ່ງທີ່ກ່າວມາຂ້າງເທິງນີ້ ກ່ຽວກັບການຮັບຮູ້ກ່ອນໜ້າຂອງໂຮງຮຽນ.

ຖ້າວ່າ ການສຶກສາເຂດບໍ່ໄດ້ຮູ້ລ່ວງໜ້າກ່ຽວກັບການຂາດສະມັດຖພາບຂອງລູກທ່ານ, ລູກຂອງທ່ານກໍອາດ ຈະຖືກລົງໂທດເຊັ່ນດຽວກັນກັບເດັກຄົນອື່ນໆທຸກຄົນ[25], ແລະຈະບໍ່ສາມາດຮັບການທົບທວນເພີ່ມເຕີມໄດ້ອີກດັ່ງທີ່ ບັນຍາຍໄວ້ໃນເອກະສານນີ້.

ຖ້າວ່າ ທ່ານຮ້ອງຂໍໃຫ້ມີການປະເມີນຜົນສຳລັບການມີເງື່ອນໄຂໄດ້ຮັບການສຶກສາພິເສດ ໃນລະຫວ່າງຊ່ວງເວລາ ຊຶ່ງລູກຂອງທ່ານຖືກລົງໂທດ, ການປະເມີນຜົນກໍຕ້ອງຖືກເລັ່ງໃຫ້ໄວຂຶ້ນ. ເຖິງແມ່ນວ່າ ກົດໝາຍຈະກຳນົດໃຫ້ມີການ ປະເມີນຜົນແບບຮີບດ່ວນ, ແຕ່ກໍບໍ່ມີກົດລະບຽບໃດໃນເລື້ອງລະຍະເວລາທີ່ຈະຕ້ອງເຮັດການປະເມີນຜົນໃຫ້ແລ້ວ. ໃນຂະນະທີ່ມີການປະເມີນຜົນ, ລູກຂອງທ່ານສາມາດຢູ່ໃນສະຖານສຶກສາສຳລອງສຳລັບການຖືກພັກການຮຽນ ຫລືການໄລ່ອອກໄດ້, ໂດຍບໍ່ໄດ້ຮັບການບໍລິການເພີ້ມເຕີມ. ຖ້າວ່າ ການປະເມີນຜົນຕັດສິນວ່າລູກຂອງທ່ານຂາດສະມັດຖພາບ ແລະມີເງື່ອນໄຂທີ່ຈະໄດ້ຮັບການບໍລິການດ້ານການສຶກສາພິເສດ, ທາງການສຶກສາເຂດຕ້ອງຈັດຫາ ການບໍລິການດ້ານການສຶກສາພິເສດ ໃຫ້ແກ່ລູກຂອງທ່ານ ແລະຕ້ອງມີການນຳໃຊ້ກົດລະບຽບດ້ານການສຶກສາພິເສດທັງໝົດ ແລະໜ້າທີ່ຮັບຜິດຊອບຕ່າງໆ ດ້ວຍ.[26]

***ໝາຍເຫດ:*** *ຖ້າວ່າ ທ່ານຕ້ອງການບົດອື່ນໆຈາກຄູ່ມື **SERR** ຫລືເອກະສານອື່ນໆ, ທ່ານສາມາດດາວໂຫລດໄດ້ ຈາກເວັບໄຊຂອງ **PAI** ທີ່ **www.pai-ca.org** ຫລືທ່ານສາມາດຮ້ອງຂໍເອົາເອກະສານໄດ້ໂດຍການໂທຣຫາຫ້ອງການຂອງພວກເຮົາທີ່ເບີໂທຣຟຣີ **(800) 776-5746***

## ຕົວຫຍໍ້ຕ່າງໆ ທີ່ໃຊ້ອ້າງອີງທາງກົດໝາຍ

| | |
|---|---|
| §, §§ | ມາດຕາ, ມາດຕາຕ່າງໆ |
| 20 U.S.C. | ໝວດທີ 20 ຂອງປະມວນກົດໝາຍສະຫະຣັຖອາເມລິກາ |
| 34 C.F.R. | ໝວດທີ 34 ຂອງປະມວນກົດໝາຍກ່ຽວກັບກົດຂໍ້ບັງຄັບຂອງຣັຖບານກາງ |
| Cal. Ed. Code | ປະມວນກົດໝາຍວ່າດ້າຍການສຶກສາແຫ່ງຣັຖຄາລິຟໍເນັຽ |
| 5 C.C.R. | ໝວດທີ 5 ຂອງປະມວນກົດໝາຍກ່ຽວກັບກົດຂໍ້ບັງຄັບຂອງຣັຖຄາລິຟໍເນັຽ |

## ເອກະສານອ້າງອີງ

[1] 20 U.S.C. §§ 1415(k)(1)(E); 34 C.F.R. § 300.530(e)(1)

[2] 20 U.S.C. §§ 1415(k)(1)(E)(i); 34 C.F.R. § 300.530(e)(1)

[3] 20 U.S.C. §§ 1415(k)(1)(E), 1415(k)(1)(F); 34 C.F.R. § 300.530(e)(1)(i) ແລະ (ii)

[4] 20 U.S.C. § 1415(k)(1)(F)(i); 34 C.F.R. § 300.530(f)(1)(i)

[5] 20 U.S.C. § 1415(k)(1)(F)(ii); 34 C.F.R. § 300.530(f)(1)(ii)

[6] Cal. Ed. Code §§ 56520 – 56525; 5 C.C.R. §§ 3001 (d), (e) ແລະ (f), ແລະ 3052; ເບິ່ງເພີ້ມເຕີມບົດທີ 5 ຂອງຄູ່ມື PAI, *ສິດທິດ້ານການສຶກສາພິເສດແລະຄວາມຮັບຜິດຊອບຕ່າງໆ*

[7] 20 U.S.C. § 1415(k)(1)(F)(iii), 1415(k)(1)(G); 34 C.F.R. § 300.530(f)(2), 300.530(g)

[8] 34 C.F.R. § 300.530(e)(3)

[9] 20 U.S.C. §§ 1415(j) ແລະ (k)(7); 34 C.F.R. §§ 300.530(f)(2), 300.530(g)

[10] 34 C.F.R. §§ 300.530(b)(2) ແລະ (d), 300.536

[11] 20 U.S.C. § 1415(k)(1)(F); 34 C.F.R. § 300.530(f)

[12] 20 U.S.C. § 1415(k)(1)(H); 34 C.F.R. § 300.530(h)

[13] 20 U.S.C. §§ 1415(k)(3)(A) ແລະ (B), 1415(k)(4)(B); 34 C.F.R. § 300.532(c)(1) ແລະ (2)

[14] 34 C.F.R. § 300.532(c)(3)

[15] 20 U.S.C. §§ 1415(k)(4)(A); 34 C.F.R. § 300.533

[16] ຄູ່ມື *ສິດທິດ້ານການສຶກສາພິເສດແລະຄວາມຮັບຜິດຊອບຕ່າງໆ* ມີໃນຮູບແບບຫລາຍພາສາຊຶ່ງເອີ້ນເອົາໄດ້ຟຣີ ໃນອິນເຕີເນັດທີ່ www.pai-ca.org/pubs ຫລືໂທຣ 800.776.5746

[17] 20 U.S.C. §§ 1415(k)(2) ແລະ (3)(B); 34 C.F.R. § 300.532(b)

[18] 34 C.F.R. § 300.532(b)(3)

[19] 20 U.S.C. §§ 1415(g) ແລະ (i); 34 C.F.R. §§ 300.514, 300.516; Cal. Ed. Code §56505(k)

[20] ກຳນົດເວລາສຳລັບການພິຈາລະນາຄະດີ –ກ່ອນຄະນະກຳມະການປົກຄອງ 40 ວັນຕາມວັນຣຽນ, ຖ້າວ່າ ຄະນະກຳມະການບໍ່ປະຊຸມກັນທຸກອາທິດ.

[21] Cal. Ed. Code § 48918(a)

[22] Cal. Ed. Code § 48919

[23] www.oah.dgs.ca.gov/Special+Education/Default.htm

[24] 20 U.S.C. §1415(k)(5); 34 C.F.R. §§ 300.534(a) ແລະ (b)

[25] 20 U.S.C. §1415(5)(D)(i); 34 C.F.R. §§ 300.534(d)(1)

[26] 20 U.S.C. §1415(5)(D)(ii); 34 C.F.R. §§ 300.534(d)(2)